# ຈົດໝາຍຂອງທ່ານໂປໂລ

ຢູ່ໃນພຣະຄັມພີມີຈົດໝາຍທີ່ຂຽນໂດຍທ່ານໂປໂລ ໑໓ ສບັບ ຖ້າຈະນັບທັງຈົດໝາຍທີ່ຂຽນໄປຫາພວກເຮັບເຣີກໍເປັນ ໑໔ ສບັບ ແຕ່ຍືນຢັນໃຫ້ບໍ່ໄດ້ວ່າ ຈົດໝາຍສບັບນັ້ນຈະແມ່ນທ່ານໂປໂລຂຽນຫລືບໍ່ ໜັງສືທັງ ໑໓ ສບັບນີ້ບໍ່ໄດ້ຈັດເຂົ້າໃນພຣະຄັມພີຕາມລຳດັບທີ່ຂຽນ ແຕ່ໄດ້ຈັດເຂົ້າຕາມລຳດັບຂອງເນື້ອຄວາມຫລືຄຳສອນໃນຈົດໝາຍເຫລົ່ານີ້ກໍແຕກຕ່າງກັນ ດັ່ງທ່ານຈະໄດ້ເຫັນຢູ່ຂ້າງລຸ່ມນີ້ :

| | | |
|---|---|---|
| ໜັງສື ໂຣມ | ສອນວ່າ | ຈະເປັນຜູ້ຊອບທັມດ້ວຍອົງພຣະຄຣິດ |
| ,, ໑ ໂກລິນໂທ | ,, | ໃຫ້ດຳເນີນຊີວິດໃນທາງບໍຣິສຸດດ້ວຍອົງພຣະຄຣິດ |
| ,, ໒ ໂກລິນໂທ | ,, | ໃຫ້ຮັບຄວາມເລົ້າໂລມດ້ວຍອົງພຣະຄຣິດ |
| ,, ຄາລາເຕັຍ | ,, | ມີເສຣີພາບດ້ວຍອົງພຣະຄຣິດ |
| ,, ເອເຟດ | ,, | ຂຶ້ນໄປຟ້າສວັນດ້ວຍອົງພຣະຄຣິດ |
| ,, ຟີລິບປອຍ | ,, | ມີຄວາມພໍໃຈດ້ວຍອົງພຣະຄຣິດ |
| ,, ໂກໂລດ | ,, | ເຖິງທີ່ສຳເຣັດໄດ້ດ້ວຍອົງພຣະຄຣິດ |

,, ໑ ເທຊາໂລນິກ ,, ມີຄວາມຫວັງດ້ວຍອົງພຣະຄຣິດ

,, ໒ ເທຊາໂລນິກ ,, ເຖິງສງ່າຣາສີໄດ້ດ້ວຍອົງພຣະຄຣິດ

,, ໑ ຕີໂມເຕ ,, ຕັ້ງຢູ່ ໃນຄວາມສັດຊື່ ດ້ວຍອົງພຣະ-
ຄຣິດ

,, ໒ ຕີໂມເຕ ,, ມີບໍາເໜັດດ້ວຍອົງພຣະຄຣິດ

,, ຕີໂຕ ,, ເປັນແບບຢ່າງທີ່ດີດ້ວຍອົງພຣະຄຣິດ

,, ຟີເລໂມນ ,, ຖືກປ່ຽນໃຈດ້ວຍອົງພຣະຄຣິດ

# ການຈັດເປັນໝວດແລະເວລາທີ່ຂຽນ

| ຊື່ໜັງສື | ຂຽນເມື່ອ | ເບິ່ງໃນກິຈການ |
|---|---|---|
| ພວກທີ ໑ ໑ ເທຊາໂລນິກ | ເມື່ອຫຼວງປ່າວປະກາດຄັ້ງທີ ໒ | ກິຈ ໑໘:໑໒ |
| ໒ ເທຊາໂລນິກ | ທີ່ເມືອງໂກລິນໂທ | |
| | ຄ.ສ. ໕໒–໕໓ | |
| ພວກທີ ໒ ໑ ໂກລິນໂທ | ເມື່ອຫຼວງປ່າວປະກາດຄັ້ງທີ ໓ | ກິຈ ໑໙:໒໐ |
| | ທີ່ເມືອງເອເຟດ | |
| | ຄ.ສ. ໕໗–໕໘ | |
| ໒ ໂກລິນໂທ | ທີ່ແຂວງມາເຊັດອັນ | ກິຈ ໒໐:໑ |
| | ຄ.ສ. ໕໗–໕໘ | |
| ຄາລາເຕັຍ | ເມື່ອປ່າວປະກາດຄັ້ງທີ ໓ | ກິຈ ໒໐:໒-໓ |
| | ຄ.ສ. ໕໗–໕໘ | |
| ໂຣມ | ທີ່ເມືອງໂກລິນໂທ | ,, |
| | ຄ.ສ. ໕໗–໕໘ | |
| ພວກທີ ໓ ເອເຟດ | ເມື່ອຖືກຂັງໄວ້ທີ່ກຸງໂຣມ | ກິຈ ໒໘:໓໐ |
| ໂກໂລດ | ຄ.ສ. ໖໒–໖໓ | ,, |
| ຟີເລໂມນ | ,, | ,, |
| ຟີລິບປອຍ | ,, | ,, |
| ພວກທີ ໔ ໑ ຕີໂມເຕ | ເມື່ອຫຼວງປ່າວປະກາດຄັ້ງທີ ໔ | ໑ ຕີໂມເຕ |
| ຕີໂຕ | ທີ່ແຂວງມາເຊັດອັຍ | ຕີໂຕ |
| | ຄ.ສ. ໖໔–໖໖ | |
| ໒ ຕີໂມເຕ | ເມື່ອຖືກຂັງໄວ້ຢູ່ກຸງໂຣມຄັ້ງທີ໒ | ໒ ຕີໂມເຕ |